**10. ທະນາຄານດູແລຊັບສິນ ແມ່ນຫຍັງ?**

ທະນາຄານດູແລຊັບສິນ ແມ່ນ ທະນາຄານທຸລະກິດ ພາຍໃນ ຫຼື ຕ່າງປະເທດ ທີ່ໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ໃຫ້ເຄື່ອນໄຫວເປັນຜູ່ດູແລຊັບສິນໃຫ້ແກ່ຜູ່ລົງທຶນທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບ.

ທະນາຄານດູແລຊັບສິນ ມີໜ້າທີ່ເປັນຜູ່ໃຫ້ບໍລິການໃນການເກັບຮັກສາຂໍ້ມູນ, ຊັບສິນ ຂອງລູກຄ້າໃຫ້ປອດໄພ, ຊຳລະເງິນ ຫຼື ຫຼັກຊັບ ຕາມຄຳສັ່ງຂອງລູກຄ້າ, ໂອນບັນຊີຫຼັກຊັບ ແລະ ບັນຊີເງິນຂອງລູກຄ້າ ຈາກທະນາຄານດູແລຊັບສິນຂອງຕົນ ໄປຍັງທະນາຄານດູແລຊັບສິນອື່ນ ຕາມການສະເໜີຂອງລູກຄ້າ, ເປັນຜູ່ຕາງໜ້າໃຫ້ແກ່ລູກຄ້າເຂົ້າຮ່ວມແລະ ລົງຄະແນນສຽງໃນກອງປະຊຸມຜູ່ຖືຮຸ້ນ ຕາມການມອບໝາຍຂອງລູກຄ້າ, ນອກນັ້ນ ກໍ່ຍັງມີໜ້າທີ່ໃນການແຈ້ງໃຫ້ລູກຄ້າຊາບກ່ຽວກັບຜົນການສະສາງ-ຊຳລະທຸລະກຳຫຼັກຊັບ ພາຍຫຼັງສິ້ນສຸດການຊື້-ຂາຍຫຼັກຊັບ, ຮັກສາຄວາມລັບກ່ຽວກັບຂໍ້ມູນຂອງລູກຄ້າ ແລະ ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ລະບຸໄວ້ໃນສັນຍາກັບລູກຄ້າ.

ປະຈຸບັນ ທະນາຄານດູແລຊັບສິນ ໃນ ສປປ ລາວ ມີ 1 ແຫ່ງ ຄື: ທະນາຄານກຸງເທບ ຈຳກັດ (ມະຫາຊົນ) ສາຂານະຄອນຫຼວງວຽງຈັນ.